*Souphanouvong University Journal of Multidisciplinary Research and Development*
*2025, Vol. 11, No. 04, 141-148*
*https://doi.org/10.69692/SUJMRD1104141*

# The Competitive Advantages of Small and Medium Enterprises in Xayabuly District, Xayabouly Province

**Dalounny Indavong*[1], Soudtida Hoongsengpha[2], Poutthalack Phanthouamath[3]**
**Namfonh Chitaphone[4] and Souksamone Sengchanh[5]**
*Department of Accounting and Budgeting, Finance Office, Souphanouvong University, Lao PDR*

***Correspondence:** Dalounny Indavong, Department of Accounting and Budgeting, Finance Office, Tel: +856 20 59264777, Email: indavong.su@gmail.com

*Article Info:*
*Submitted: October 02, 2025*
*Revised: December 10, 2025*
*Accepted: December 25, 2025*

**Abstract**

The objectives of this research were to study the operational competitive advantages of small and medium sized enterprises in Xayabouly district, Xayabouly Province, to Study the strategic management factors within the organization of small and medium sized enterprises in Xayabouly district, Xayabouly Province and to study the organization management strategic factors influence the competitive advantage in the operation of small and medium-sized enterprises in Xayaburi District, Xayaburi Province. The research was conducted by using a questionnaire as an instrument for collecting data from 320 SMEs Entrepreneurs in the Xayabouly district, Xayabouly Province. The Cronbach alpha reliability coefficient was 0.969. The statistics used for data analysis were frequency, percentage, mean, standard deviation, Multiple Regression analysis. The results revealed that:

The operational competitive advantages of SMEs in Xayaburi district were generally found to have highly competitive advantages, which included: operating cost advantages, followed by differentiation advantages, rapid response advantages, and segmentation advantages.

The strategic management factors within the organization of small and medium-sized enterprises in Xayaburi District, Xayaburi Province were generally used in the operation at a good level, which includes: the personnel factor, the work system factor, the strategic factors, the skill, knowledge / ability factor, the shared value factor and the structural factors of the organization.

The strategic management factors within the organization influence the competitive advantage in the operation of small and medium-sized enterprises in Xayaburi District, Xayaburi Province were included: the skill knowledge / ability factor, the strategic planning factor, the management style, personnel factor and the operation system factor.

**Keywords:** *The Competitive advantages, The strategic management factors within the organization, Small and Medium Enterprise.*

## 1. ພາກສະເໜີ

ທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີບົດບາດສໍາຄັນຕໍ່ລະບົບເສດຖະກິດຂອງປະເທດລາວ ເປັນພະລັງຂັບເຄື່ອນທີ່ສໍາຄັນຂອງເສດຖະກິດ ເນື່ອງຈາກ SMEs ມີຢູ່ໃນທຸລະກິດທຸກປະເພດ ທັງນີ້ທຸລະກິດອຸດສາຫະກໍາການຜະລິດ, ທຸລະກິດການຄ້າ, ລວມເຖິງທຸລະກິດການບໍລິການເຮັດໃຫ້ SMEs ເປັນຮາກຖານສໍາຄັນໃນການພັດທະນາ

ລະບົບເສດຖະກິດຂອງປະເທດໃຫ້ເຂັ້ມແຂງ (Huggins et al, 2009) ເຊິ່ງເຫັນໄດ້ຈາກຂໍ້ມູນລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນ ຂອງລາວເຮົາໃນ ປີ 2016 ມີມູນຄ່າ 2,025 ໂດລາສະຫະລັດ ແລະ ໃນປີ 2019 ເພີ່ມຂຶ້ນມາເປັນ 2,654 ໂດລາສະຫະລັດ ແລະ 2020 ເພີ່ມຂຶ້ນ ເປັນ 2,664 ໂດລາສະຫະລັດ ແລະ ປີ 2022: 2,022 ໂດລາສະຫະລັດ, ລວມຍອດລາຍໄດ້ແຫ່ງຊາດ (GNI) ບັນລຸໄດ້ 2,106 ໂດລາສະຫະລັດ ໃນປີ 2020 ແລະ ໃນໄລຍະ 7 ປີຜ່ານມາ (2016-2022) ເສດຖະກິດ ຂອງປະເທດລາວໄດ້ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງສະເລ່ຍຢູ່ໃນລະດັບ 5.8%ຕໍ່ປີ (ທະນາຄານແຫ່ງ ສປປ ລາວ, 2022: 26) ປັດໄຈທີ່ຊຸກຍູ້ການ ຂະຫຍາຍຕົວເສດຖະກິດສ່ວນໃຫຍ່ມາຈາກຂະແໜງອຸດສາຫະກຳ ແລະ ເສດຖະກິດໄດ້ເລີ່ມຫັນໄປສູ່ຂະແໜງອຸດສາຫະກຳປຸງແຕ່ງ ແລະ ການ ບໍລິການ ທີ່ຕິດພັນກັບການສ້າງວຽກເຮັດງານທຳ ແລະ ລາຍໄດ້ຂອງ ປະຊາຊົນຕາມທິດທີ່ມີຄຸນນະພາບ ແລະ ຍືນຍົງຫຼາຍຂຶ້ນ (ກະຊວງ ແຜນການ ແລະ ການລົງທຶນ, 2021: 12).

ແຂວງໄຊຍະບູລີເປັນແຂວງໜຶ່ງໃນບັນດາ 8 ແຂວງພາກເໜືອ ຂອງປະເທດລາວທີ່ໄດ້ມີການເຕີບໂຕຢ່າງຕໍ່ເນື່ອງ ແລະ ໂຄງລ່າງພື້ນຖານ ຫຼາຍດ້ານໄດ້ຮັບການພັດທະນາດີຂຶ້ນ, ການຜະລິດໃນຂະແໜງກະສິກຳ, ອຸດສາຫະກຳ ແລະ ການບໍລິການໄດ້ເພີ່ມຂຶ້ນໃນລະດັບທີ່ເພິ່ງພໍໃຈ, ໂດຍລວມແລ້ວຖືວ່າເສດຖະກິດມີການຂະຫຍາຍຕົວໃນຈັງຫວະທີ່ໃກ້ຄຽງ ກັບບັນດາແຂວງພາກເໜືອ ເຊິ່ງເສດຖະກິດຂະຫຍາຍຕົວຕໍ່ເນື່ອງຕະຫຼອດ ໄລຍະເວລາ 5 ປີ (2016-2020) ສະເລ່ຍປີລະ 6.7% ຕໍ່ປີ, ລວມຍອດ ຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນ ເພີ່ມຂຶ້ນ ຈາກ 2,413 ໂດລາ ສະຫະລັດ ໃນປີ 2015 ມາເປັນ 3,031 ໂດລາໃນປີ 2020, ໂຄງປະກອບ ເສດຖະກິດແມ່ນຫັນປ່ຽນໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນ ສະໄໝ ເທື່ອລະກ້າວ ເຊິ່ງສະແດງອອກໃນສັດສ່ວນຂະແໜງກະສິກຳໃນ ໂຄງປະກອບເສດຖະກິດໄດ້ຫຼຸດລົງ ຈາກ 33,5% ໃນປີ 2015 ມາເປັນ 26.3% ໃນປີ 2020, ສັດສ່ວນອຸດສາຫະກຳ ເພີ່ມຂຶ້ນ ຈາກ 33.2% ໃນ ປີ 2015 ມາເປັນ 35.9% ໃນປີ 2020 ແລະ ສັດສ່ວນຂະແໜງບໍລິການ ເພີ່ມຂຶ້ນ ຈາກ 33% ປີ 2015 ມາເປັນ 37.8% ໃນປີ 2020; ໃນນີ້, ຂະແໜງກະສິກຳເພີ່ມຂຶ້ນໂດຍສະເລ່ຍ 3%, ຂະແໜງອຸດສາຫະກຳ ເພີ່ມ ຂຶ້ນໂດຍສະເລ່ຍ 9.6% ແລະ ຂະແໜງບໍລິການ ເພີ່ມຂຶ້ນໂດຍສະເລ່ຍ 6.5% (ພະແນກແຜນການ ແລະ ການລົງທຶນແຂວງໄຊຍະບູລີ, 2020: 2). ໃນການຂະຫຍາຍຕົວຂອງເສດຖະກິດຂອງແຂວງໄຊຍະບູລີ ສ່ວນ ໃຫຍ່ແມ່ນອີງໃສ່ຊັບພະຍາກອນທຳມະຊາດທີ່ຕິດພັນກັບຂະແໜງກະສິກຳ ໂດຍສະເພາະແມ່ນການສົ່ງອອກຜົນຜະລິດກະສິກຳ ແລະ ຂະແໜງອຸດສາຫະກຳ ເປັນຕົວຂັບເຄື່ອນ ສ່ວນຂະແໜງການບໍລິການແມ່ນມີ ທ່າກ້າວຂະຫຍາຍຕົວດີ ແຕ່ຍັງປະກອບສ່ວນຕໍ່ເສດຖະກິດຍັງບໍ່ທັນ ແຂງແຮງເທົ່າທີ່ຄວນ, ຖ້າເບິ່ງເຖິງຄຸນນະພາບຂອງການເຕີບໂຕ ເສດຖະກິດແລ້ວແມ່ນຍັງບໍ່ບັນລຸຕາມແຜນທີ່ວາງໄວ້ ແຕ່ເປັນການເຕີບ ໂຕຂອງເສດຖະກິດທີ່ມາຈາກການຜະລິດຕົວຈິງ ເຊິ່ງເປັນພື້ນຖານອັນ ໜັກແໜ້ນໃຫ້ແກ່ການພັດທະນາເສດຖະກິດໃນຕໍ່ໜ້າມີການເຕີບໂຕທີ່ ມີຄຸນນະພາບ, ມີຈຸດສຸມ, ຍືນຍົງ ແລະ ສີຂຽວ, ການຈ້າງງານທີ່ແທ້ຈິງ ທົ່ວແຂວງມີແຮງງານທັງໝົດ 294,218 ຄົນ ໃນນີ້ຂົງເຂດກະສິກຳ ກວມ 73.8% ແລະ ເຫັນໄດ້ທົ່ວແຂວງມີຫົວໜ່ວຍທຸລະກິດຈົດ ທະບຽນທັງໝົດ 6,897 ຫົວໜ່ວຍ ມາເຖິງປີ 2023 ມີ 5,297 ຫົວ ໜ່ວຍ ໃນນີ້ມີຫົວໜ່ວຍທຸລະກິດທີ່ຢຸດເຊົາ ແລະ ບໍ່ມີຕົວຕົນ ແມ່ນ 1,600 ຫົວໜ່ວຍ ສົມທຽບປີ 2020 ແມ່ນຫຼຸດລົງ 23.2% (ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງໄຊຍະບູລີ, 2023). ສະນັ້ນ, ຂະບວນ ການພັດທະນາເສດຖະກິດທີ່ດີນັ້ນຈະຕ້ອງມີການສ້າງວຽກເຮັດງານທຳ ໃຫ້ເກີດຂຶ້ນຢູ່ເລື້ອຍໆ ຍ້ອນແນວນັ້ນເຮັດໃຫ້ປະເທດຕ່າງໆ ທີ່ພັດທະນາ ແລ້ວ ແລະ ກຳລັງພັດທະນາຫັນກັບມາສົນໃຈກັບທຸລະກິດຂະໜາດ ນ້ອຍຫຼາຍຂຶ້ນ ແຕ່ທຸລະກິດສາມາດເກີດໄດ້ຢ່າງໄວວາ ແລະ ການສ້າງ ວຽກເຮັດງານທຳທີ່ສູງຂຶ້ນແຕ່ທຸລະກິດຂະໜາດໃຫຍ່ຕ້ອງໃຊ້ໄລຍະ ເວລາໃນການຈະເລີນເຕີບໂຕ ການກໍ່ຕັ້ງຕ້ອງໃຊ້ເວລາ, ທີ່ດິນ ແລະ ການແກ້ໄຂບັນຫາດ້ານແຮງງານແມ່ນຊັກຊ້າ ແລະ ນ້ອຍກ່ວາ. ດັ່ງນັ້ນ, ຖ້າລັດຖະບານບໍ່ສົ່ງເສີມການປະກອບທຸລະກິດຂະໜາດນ້ອຍຈຶ່ງເທົ່າກັບ ວ່າເປັນການທຳລາຍບ່ອນທີ່ສ້າງງານ ແລະ ເຮັດໃຫ້ມີຜົນກະທົບຕາມມາ ເຊັ່ນ: ໃນປະເທດຍີ່ປຸ່ນປະກົດວ່າທຸລະກິດຂະໜາດນ້ອຍສາມາດຈ້າງງານໄດ້ເຖິງອັດຕາ 50-80% ຂອງຈຳນວນທຸລະກິດທັງໝົດໃນບັນດາ ປະເທດສະມາຊິກອາຊຽນມີຈຳນວນເຖິງ 96% ແລະ ມີການຈ້າງງານ ເຖິງອັດຕາ 50-80% ສົ່ງຜົນຕໍ່ການເຕີບໂຕຂອງຍອດຜະລິດຕະພັນພາຍ ໃນ GDP 30-50% ຄວາມສາມາດສົ່ງສິນຄ້າອອກມີເຖິງ 19-31% ແລະ ທັງເປັນການເປີດໂອກາດໃຫ້ແກ່ຜູ້ປະກອບການຫຼຸ້ນໃໝ່ ແລະ ແມ່ຍິງໃນການພັດທະນາປະເທດອີກດ້ວຍ (Sirivanh, 2015: 1-11). ຈາກເຫດຜົນຂ້າງເທິງຈຶ່ງເຫັນໄດ້ເຖິງຄວາມສຳຄັນຂອງວຽກງານການ ດຳເນີນທຸລະກິດພາຍໃນແຂວງ. ດັ່ງນັ້ນ, ໃນການທີ່ຈະວາງແຜນ ພັດທະນາທຸລະກິດພາຍໃນໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບ ຄວາມເປັນຈິງໄດ້ຢ່າງມີປະສິດທິຜົນນັ້ນ, ພັກ-ລັດໄດ້ມີນະໂຍບາຍໃຫ້ບູລິມະສິດຫຼັກໆ ໃນຂະແໜງທີ່ໃຊ້ແຮງງານຫຼາຍຂຶ້ນເປັນຕົ້ນ: ຂະແໜງປຸງແຕ່ງ, ຂະແໜງທ່ອງທ່ຽວ, ຂະແໜງຫັດຖະກຳ ແລະອື່ນໆ, ເວົ້າ ໂດຍລວມກໍ່ແມ່ນການດຳເນີນງານທຸລະກິດບໍ່ວ່າຈະເປັນທຸລະກິດຂະໜາດນ້ອຍ ຫຼື ທຸລະກິດຂະໜາດກາງ ທີ່ຈະຊ່ວຍເຮັດໃຫ້ເກີດການກະຈາຍ ລາຍໄດ້ຈາກກຸ່ມຜູ້ປະກອບທຸລະກິດໄປສູ່ກຸ່ມຄົນຕ່າງໆເຮັດໃຫ້ເກີດ ການຈ້າງງານ ແລະ ປະຊາຊົນມີລາຍໄດ້ ເຊິ່ງເປັນຕົວຊ່ວຍຂອງໂຄງສ້າງ ເສດຖະກິດ ແລະ ສັງຄົມດີຂຶ້ນຕະຫຼອດ. ດັ່ງນັ້ນ, ລັດຖະບານ ຄະນະພັກ ອົງການປົກຄອງແຂວງຈຶ່ງເຫັນໄດ້ເຖິງຄວາມສຳຄັນຂອງວຽກງານການ ຄ້າ, ການຜະລິດເພື່ອເປັນການຊຸກຍູ້ການພັດທະນາເສດຖະກິດໃຫ້ເປັນ ໄປຕາມທິດຫັນເປັນອຸດສາຫະກຳທັນສະໄໝເທື່ອລະກ້າວ, ສົ່ງເສີມການ

ຜະລິດເປັນສິນຄ້າ, ນໍາໃຊ້ວິທະຍາສາດ-ເຕັກໂນໂລຊີເຂົ້າໃນຜະລິດ ແລະ ການບໍລິການປຸກລະດົມກໍາລັງແຮງງານທຸກພາກສ່ວນເສດຖະກິດເຂົ້າໃນການພັດທະນາ, ແກ້ໄຂຂໍ້ຫຍຸ້ງຍາກຂອງປະຊາຊົນໃຫ້ຫຼຸດລົງເທື່ອລະກ້າວ ເຊິ່ງໄດ້ສະແດງອອກໃນແຜນພັດທະນາເສດຖະກິດ - ສັງຄົມປີ 2021-2025 ໂດຍໄດ້ມີນະໂຍບາຍສົ່ງເສີມວຽກງານ SMEs ໃນຫຼາຍໆດ້ານ ແລະ ເພີ່ມທະວີການດຶງດູດການລົງທຶນເອກະຊົນພາຍໃນ-ຕ່າງປະເທດ ເຂົ້າມາລົງທຶນພັດທະນາວິສະຫະກິດຂະໜາດນ້ອຍ ແລະ ກາງ, ເພື່ອຜະລິດສິນຄ້າຕິດພັນກັບການປຸງແຕ່ງໃຫ້ມີຈໍານວນເພີ່ມຂຶ້ນທັງຮັບປະກັນຄຸນນະພາບ ແລະ ເປັນຕ່ອງໂສ້ການຜະລິດກັບວິສະຫະກິດພາຍໃນ, ປັບປຸງໂຄງສ້າງເສດຖະກິດໄປຕາມທິດການຫັນເສດຖະກິດເປັນທັນສະໄໝ ແລະ ຄຽງຄູ່ກັນນີ້ບັນດາຫົວໜ່ວຍທຸລະກິດເອງກໍ່ຕ້ອງໄດ້ມີການປັບປຸງໃນຫຼາຍດ້ານໃນການດໍາເນີນງານພາຍໃນອົງກອນທຸລະກິດຢ່າງຕໍ່ເນື່ອງເປັນລະບົບ ໂດຍມີແຜນທຸລະກິດທີ່ເປັນໄປໄດ້ ແລະ ມີຄວາມໜ້າເຊື່ອຖື, ມີການຄຸ້ມຄອງບໍລິຫານທີທັນສະໄໝ ແລະ ການປັບປຸງລະບົບການລາຍງານບັນຊີ ແລະ ການເງິນ ເພື່ອໃຫ້ສາມາດເຂົ້າເຖິງແຫຼ່ງທຶນຫຼາຍຂຶ້ນ, ສ້າງ ແລະ ຊຸກຍູ້ສົ່ງເສີມຫົວໜ່ວຍທຸລະກິດຂອງຕົນເອງໃຫ້ສາມາດນໍາໃຊ້ໂອກາດຈາກການເປີດກວ້າງ ແລະ ການເຊື່ອມໂຍງໃນພາກພື້ນ ແລະ ສາກົນໃຫ້ມີປະສິດທິຜົນສູງກວ່າເກົ່າ ເພື່ອເສີມສ້າງສັກກະຍະພາບໃນການດໍາເນີນງານ ແລະ ມີຄວາມສາມາດແຂ່ງຂັນຕໍ່ຄູ່ແຂ່ງໄດ້ສູງຂຶ້ນ ແລະ ມີຄວາມຍືນຍົງໃນອານາຄົດ (ກະຊວງແຜນການ ແລະ ການລົງທຶນ, 2021: 12).

ດ້ວຍເຫດນີ້, ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈທີ່ຈະສຶກສາເຖິງຄວາມໄດ້ປຽບທາງການແຂ່ງຂັນ ໃນການດໍາເນີນງານຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນເຂດເທດສະບານເມືອງໄຊຍະບູລີ ແຂວງໄຊຍະບູລີ, ໂດຍມີຈຸດປະສົງໃນການຄົ້ນຄວ້າຄັ້ງນີ້ມີ 3 ຈຸດປະສົງຄື: ສຶກສາປັດໄຈຍຸດທະສາດການບໍລິຫານພາຍໃນອົງກອນ ສຶກສາລະດັບຄວາມໄດ້ປຽບໃນການດໍາເນີນງານ ຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ ເມືອງໄຊຍະບູລີ ແຂວງໄຊຍະບູລີ ແລະ ສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມໄດ້ປຽບທາງການແຂ່ງຂັນໃນການດໍາເນີນງານຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ ເມືອງໄຊຍະບູລີ ແຂວງໄຊຍະບູລີ.

## 2. ວິທີການຄົ້ນຄວ້າ

### 2.1 ເຄື່ອງມືໃນການເກັບຂໍ້ມູນ

ໃນການສຶກສາຄັ້ງນີ້ເປັນການສຶກສາຄົ້ນຄວ້າແບບສໍາຫຼວດທາງປະລິມານ (Survey Quantitative Research) ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ປະກອບດ້ວຍ: ແບບສອບຖາມ (Questionnaires) ໂດຍມີຂໍ້ຄໍາຖາມທີ່ເປັນແບບເລືອກຕອບຕາມລາຍການ (Check List) ແລະ ມີຄໍາຖາມເປັນແບບມາດຕາສ່ວນປະມານຄ່າ 5 ລະດັບຕາມຂອງ Likerts Scales ເຊິ່ງການສ້າງແບບສອບຖາມແມ່ນນໍາໃຊ້ທິດສະດີການມີສ່ວນຮ່ວມ ແລະ ແນວຄິດປະເພດກິດຈະກໍາຄວາມຮັບຜິດຊອບຕໍ່ສັງຄົມ ໂດຍມີຄ່າຄວາມໜ້າເຊື່ອຖື (Cronbach's Alpha) ເທົ່າກັບ 0.969 ໂດຍແບ່ງອອກເປັນ 3 ສ່ວນຄື:

- ສ່ວນທີ 1: ແມ່ນຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ
- ສ່ວນທີ 2: ແມ່ນຂໍ້ມູນສະພາບການດໍາເນີນງານຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງໃນເມືອງໄຊຍະບູລີ ແຂວງໄຊຍະບູລີ.
- ສ່ວນທີ 3: ແມ່ນຂໍ້ມູນກ່ຽວກັບລະດັບຄວາມໄດ້ປຽບໃນການດໍາເນີນງານຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ

### 2.2 ປະຊາກອນ ແລະ ຂະໜາດກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການສຶກສາຄົ້ນຄວ້າຄັ້ງນີ້ແມ່ນ ຜູ້ປະກອບການທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງໃນເຂດພື້ນທີ່ເມືອງໄຊຍະບູລີ ແຂວງໄຊຍະບູລີ ມີທັງໝົດ 1,573 ຫົວໜ່ວຍທຸລະກິດ (ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງໄຊຍະບູລີ, 2023) ແລະ ໄດ້ກໍານົດຂະໜາດກຸ່ມຕົວຢ່າງແບບຮູ້ປະຊາກອນທີ່ແນ່ນອນຂອງ ທາໂຣ ຍາມາເນ່ (Yamane, 1973) ເຊິ່ງສາມາດກໍານົດໄດ້ 320 ຫົວໜ່ວຍທຸລະກິດ.

### 2.3 ວິທີການເກັບກໍາຂໍ້ມູນ

ຜູ້ຄົ້ນຄວ້າໄດ້ແຈກແບບສອບຖາມໃຫ້ກຸ່ມຕົວຢ່າງທັງໝົດ 320 ສະບັບ ໂດຍເລີ່ມເກັບກໍາຂໍ້ມູນ ແຕ່ເດືອນເມສາ 2023 - ມິຖຸນາ 2024 ເຊິ່ງສາມາດເກັບ ແລະ ລວບລວມຄືນໄດ້ທັງໝົດ 100% ເຊິ່ງໃຊ້ວິທີການສຸ່ມຕົວຢ່າງແບບເຈາະຈົງ (Purposive Sampling) ແລະ ແຈກແບບສອບຖາມໃຫ້ກຸ່ມຕົວຢ່າງແບບສະດວກ (Convenience sampling) (Cochran, 1963).

### 2.4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນແມ່ນນໍາໃຊ້ສະຖິຕິພັນລະນາ ແລະ ສະຖິຕິອ້າງອີງ ອ້າງໃນ (Siljiru, 2010) ເຊິ່ງເປັນການວິເຄາະຊອກຫາຄ່າທາງສະຖິຕິຕ່າງໆ ເຊັ່ນ: ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Std. Deviation) ແລະ ຄ່າສໍາປະສິດສະຫະສໍາພັນການຖົດຖອຍທະວີຄູນ (Multiple Regression Correlation Coefficient), ດ້ວຍການນໍາໃຊ້ໂປຼແກມສໍາເລັດຮູບທາງສະຖິຕິ SPSS version 22.0. ເຂົ້າໃນການວິເຄາະຂໍ້ມູນ

## 2.3 ແນວຄິດ ການຄົ້ນຄວ້າ




ຮູບທີ 1: ສະແດງກອບແນວຄິດຂອງການຄົ້ນຄວ້າ

## 3. ຜົນໄດ້ຮັບ

ສະພາບການດຳເນີນທຸລະກິດຂອງຜູ້ປະກອບການວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນເຂດເທດສະບານເມືອງໄຊຍະບູລີ ແຂວງໄຊຍະບູລີ ໂດຍຜົນຂອງການວິເຄາະມີຄື: ຜູ້ປະກອບການທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນເມືອງໄຊຍະບູລີ ທີ່ເປັນກຸ່ມຕົວຢ່າງຈຳນວນທັງໝົດ 320 ຄົນ ເຫັນວ່າ: ສ່ວນຫຼາຍເປັນເພດຊາຍ ມີຈຳນວນ 188 ຄົນ ເທົ່າກັບ 58.8%, ມີອາຍຸ 50 ປີ ຂຶ້ນໄປ ມີຈຳນວນ 83 ຄົນ ເທົ່າກັບ 25.9%, ມີສະຖານະພາບແຕ່ງງານແລ້ວ ມີຈຳນວນ 282 ຄົນ ເທົ່າກັບ 88.1%, ມີລະດັບການສຶກສາຈົບວິຊາສະເພາະລະດັບປະລິນຍາຕີ ມີຈຳນວນ 128 ຄົນ ເທົ່າກັບ 40%, ເປັນທຸລະກິດທີ່ໄດ້ສ້າງຕັ້ງຂຶ້ນຢູ່ລະຫວ່າງ 6 - 10 ປີ ມີຈຳນວນ 114 ແຫ່ງເທົ່າກັບ 35.6%, ຈົດຂຶ້ນທະບຽນພາຍໃຕ້ຮູບແບບວິສາຫະກິດສ່ວນບຸກຄົນ ມີຈຳນວນ 249 ແຫ່ງ ເທົ່າກັບ 77.8%, ມີມູນຄ່າຈົດທະບຽນຢູ່ລະຫວ່າງ 240,000,000 – 1,800,000,000 ກີບ ມີຈຳນວນ 284 ແຫ່ງ ເທົ່າກັບ 88.8%, ແຫຼ່ງເງິນທຶນໃນການເລີ່ມຕົ້ນກິດຈະການແມ່ນນຳໃຊ້ທຶນຕົນເອງ 100% ມີຈຳນວນ 126 ແຫ່ງ ເທົ່າກັບ 39.4%, ນຳໃຊ້ກຳໄລສະສົມເປັນແຫຼ່ງເງິນທຶນໝູນວຽນຂອງຜູ້ທຸລະກິດ SMEs ມີຈຳນວນ 116 ແຫ່ງ ເທົ່າກັບ 36.3%, ມີລາຍຮັບສະເລ່ຍຕໍ່ເດືອນຢູ່ລະຫວ່າງ 50,000,000 - 100,000,000 ກີບ ມີຈຳນວນ 120 ແຫ່ງ ເທົ່າກັບ 37.5%, ດຳເນີນທຸລະກິດໃນຂະແໜງການຄ້າ ມີຈຳນວນ 139 ແຫ່ງ ເທົ່າກັບ 43.4%, ມີຕະຫຼາດເປົ້າໝາຍຢູ່ພາຍໃນປະເທດ ມີຈຳນວນ 282 ແຫ່ງ ເທົ່າກັບ 88.1% ແລະ ມີການຈ້າງແຮງງານຢູ່ລະຫວ່າງ 1 - 5 ຄົນ ມີຈຳນວນ 147 ຄົນ ເທົ່າກັບ 45.9%. ສຳລັບການນຳໃຊ້ປັດໄຈຍຸດທະສາດການບໍລິຫານຈັດການພາຍໃນອົງກອນເຂົ້າໃນການດຳເນີນງານຂອງທຸລະກິດ SMEs ໃນເມືອງໄຊຍະບູລີ ເຫັນວ່າ: ທຸລະກິດ SMEs ດ້ານປັດໄຈຍຸດທະສາດໃນການບໍລິຫານຈັດການພາຍໃນອົງກອນມີການນຳໃຊ້ເຂົ້າໃນການດຳເນີນງານຂອງທຸລະກິດ SMEs ໂດຍລວມຢູ່ໃນລະດັບດີ ມີຄ່າສະເລ່ຍເທົ່າ 3.54 ແລະ ຄ່າ S.D= 0.617 ເຊິ່ງໃນນີ້ປັດໄຈຍຸດທະສາດດ້ານບຸກຄະລາກອນ ແມ່ນມີການນຳໃຊ້ໄດ້ໃນລະດັບດີໃນລຳດັບທຳອິດ ມີຄ່າສະເລ່ຍເທົ່າ 3.66 ແລະ ຄ່າ S.D= 0.833, ຮອງລົງມາແມ່ນປັດໄຈຍຸດທະສາດດ້ານຮູບແບບການບໍລິຫານ ມີຄ່າສະເລ່ຍເທົ່າ 3.60 ແລະ ຄ່າ S.D= 0.781, ຖັດມາແມ່ນດ້ານລະບົບການປະຕິບັດງານ ມີຄ່າສະເລ່ຍເທົ່າ 3.57 ແລະ ຄ່າ S.D= 0.816, ດ້ານຍຸດທະສາດ ມີຄ່າສະເລ່ຍເທົ່າ 3.56 ແລະ ຄ່າ S.D= 0.774, ດ້ານທັກສະ/ຄວາມຮູ້ ຄວາມສາມາດ ມີຄ່າສະເລ່ຍເທົ່າ 3.53 ແລະ ຄ່າ S.D= 0.803, ດ້ານຄ່ານິຍົມຮ່ວມ ມີຄ່າສະເລ່ຍເທົ່າ 3.45 ແລະ ຄ່າ S.D= 0.802 ແລະ ສຸດທ້າຍແມ່ນປັດໄຈຍຸດທະສາດການບໍລິຫານຈັດການພາຍໃນອົງກອນດ້ານໂຄງສ້າງຂອງອົງກອນທຸລະກິດ ມີຄ່າສະເລ່ຍເທົ່າ 3.43 ແລະ ຄ່າ S.D= 0.777.

ທຸລະກິດ SMEs ໃນເຂດເມືອງໄຊຍະບູລີ ໂດຍລວມແລ້ວມີຄວາມໄດ້ປຽບໃນການດຳເນີນງານຂອງທຸລະກິດຢູ່ໃນລະດັບສູງ ມີຄ່າສະເລ່ຍເທົ່າ 3.51 ແລະ ຄ່າ S.D= 0.623 ເມື່ອພິຈາລະນາດ້ານຍ່ອຍແລ້ວເຫັນວ່າ: ຄວາມໄດ້ປຽບໃນການດຳເນີນງານຂອງຜູ້ປະກອບການທຸລະກິດ SMEs ທີ່ມີຄ່າສະເລ່ຍສູງໃນລຳດັບທຳອິດແມ່ນຄວາມໄດ້ປຽບໃນດ້ານຕົ້ນທຶນໃນການດຳເນີນງານ ມີຄ່າສະເລ່ຍເທົ່າ 3.58 ແລະ ຄ່າ S.D= 0.759, ລຳດັບຮອງລົງມາແມ່ນຄວາມໄດ້ປຽບໃນດ້ານການສ້າງຄວາມແຕກຕ່າງ ມີຄ່າສະເລ່ຍເທົ່າ 3.55 ແລະ ຄ່າ S.D= 0.770, ຖັດມາແມ່ນດ້ານການຕອບສະໜອງທີ່ວ່ອງໄວ ມີຄ່າສະເລ່ຍເທົ່າ 3.52 ແລະ ຄ່າ S.D= 0.759 ແລະ ລຳດັບສຸດທ້າຍແມ່ນມີຄວາມຄວາມໄດ້ປຽບໃນດ້ານການການມຸ້ງຕອບສະໜອງສະເພາະສ່ວນ ມີຄ່າສະເລ່ຍເທົ່າ

3.39 ແລະ ຄ່າ S.D= 0.760 ເຊິ່ງເປັນຄວາມໄດ້ປຽບໃນລະດັບປານກາງ.

ປັດໄຈຍຸດທະສາດການບໍລິຫານຈັດການພາຍໃນອົງກອນ ຂອງທຸລະກິດ SMEs ໃນເມືອງໄຊຍະບູລີ ມີຄວາມສຳພັນກັບຄວາມໄດ້ປຽບໃນການດຳເນີນງານໂດຍລວມ ຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ (Y) ຢູ່ໃນລະດັບປານສູງ (R = 0.689) ແລະ ມີຄວາມສາມາດອະທິບາຍ ຫຼື ພະຍາກອນລະດັບຄວາມໄດ້ປຽບໃນການດຳເນີນງານໂດຍລວມໄດ້ເຖິງ 47.5% ($R^2$ = 0.4757) ສ່ວນທີ່ເຫຼືອອີກ 52.5% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ 0.45689 ແລະ ເຫັນວ່າປັດໄຈຍຸດທະສາດການບໍລິຫານຈັດການພາຍໃນອົງກອນດ້ານການວາງແຜນຍຸດທະສາດ ($X_1$) ມີຄ່າ $\beta$ ເທົ່າ 0.0.173, ປັດໄຈຍຸດທະສາດດ້ານໂຄງສ້າງຂອງອົງກອນທຸລະກິດ ($X_2$) ມີຄ່າ $\beta$ ເທົ່າ 0.072, ດ້ານລະບົບການປະຕິບັດວຽກ ($X_3$) ມີຄ່າ $\beta$ ເທົ່າ 0.082, ດ້ານຮູບແບບການບໍລິຫານ ($X_4$) ມີຄ່າ $\beta$ ເທົ່າ 0.119, ດ້ານບຸກຄະລາກອນ ($X_5$) ມີຄ່າ $\beta$ ເທົ່າ 0.021, ດ້ານທັກສະຄວາມຮູ້ /ຄວາມສາມາດ ($X_6$) ມີຄ່າ $\beta$ ເທົ່າ 0.194 ແລະ ດ້ານຄ່ານິຍົມຮ່ວມ ($X_7$) ມີຄ່າ $\beta$ ເທົ່າ 0.025 ໃນການຄົ້ນຄວ້າຄັ້ງນີ້ມີສົມຜົນພະຍາກອນຄວາມໄດ້ປຽບທາງການແຂ່ງຂັນໃນການດຳເນີນງານ ຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ໄດ້ຄື:

$$\hat{Y} = 0.173\,(X_1)^{***} + 0.072\,(X_2)^{ns} + 0.082\,(X_3)^{*} + 0.119\,(X_4)^{***} + 0.021\,(X_5)^{**} + 0.194\,(X_6)^{***} + 0.025\,(X_7)^{ns}$$

ໝາຍເຫດ: *** ໝາຍເຖິງມີລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.01 ມີຄວາມເຊື່ອໝັ້ນ 99%.

* ໝາຍເຖິງມີລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ມີຄວາມເຊື່ອໝັ້ນ 90%.

ns ໝາຍເຖິງບໍ່ມີຄວາມສຳຄັນທາງສະຖິຕິ ບໍ່ມີຄວາມເຊື່ອໝັ້ນ.

## 4. ວິພາກຜົນ

ທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນເມືອງໄຊຍະບູລີສ່ວຍຫຼາຍເປັນທຸລະກິດທີ່ໄດ້ສ້າງຕັ້ງຂຶ້ນຢູ່ລະຫວ່າງ 6 - 10 ປີ, ຈົດຂຶ້ນທະບຽນພາຍໃຕ້ຮູບແບບວິສາຫະກິດສ່ວນບຸກຄົນ, ມີມູນຄ່າຈົດທະບຽນຢູ່ລະຫວ່າງ 240,000,000 – 1,800,000,000 ກີບ, ແຫຼ່ງເງິນທຶນໃນການເລີ່ມຕົ້ນກິດຈະການແມ່ນນຳໃຊ້ທຶນຕົນເອງ 100%, ນຳໃຊ້ກຳໄລສະສົມເປັນແຫຼ່ງເງິນທຶນໝູນວຽນຂອງທຸລະກິດ, ມີລາຍຮັບສະເລ່ຍຕໍ່ເດືອນຢູ່ລະຫວ່າງ 50,000,000 - 100,000,000 ກີບ, ດຳເນີນທຸລະກິດໃນຂະແໜງການຄ້າ, ມີຕະຫຼາດເປົ້າໝາຍຈຳໜ່າຍແມ່ນຕະຫຼາດພາຍໃນປະເທດ, ການຈ້າງແຮງງານຢູ່ລະຫວ່າງ 1 - 5 ຄົນ, ມີຫຼັກການໃນການບໍລິຫານການດຳເນີນທຸລະກິດແມ່ນເນັ້ນປະສົບການ ຜົນການຄົ້ນຄວ້າມີຄວາມສອດຄ່ອງກັບຜົນການຄົ້ນຄວ້າຂອງ Liyaket et al. (2024) ໄດ້ສຶກສາສະພາບການດຳເນີນງານຂອງທຸລະກິດ SMEs ຂອງຜູ້ປະກອບການໃນເມືອງນານ ແຂວງຫຼວງພະບາງ ເຊິ່ງພົບວ່າ ໄລຍະເວລາໃນການດຳເນີນງານ ຫຼື ສ້າງຕັ້ງທຸລະກິດສ່ວນໃຫຍ່ແມ່ນ 6-10 ປີ, ການສ້າງຕັ້ງທຸລະກິດແມ່ນສ້າງຂຶ້ນພາຍໃຕ້ຮູບແບບສ່ວນບຸກຄົນ, ລົງທຶນໃນຂະແໜງການຄ້າ, ຕະຫຼາດເປົ້າໝາຍແມ່ນລູກຄ້າພາຍໃນ, ມີການຈ້າງແຮງງານ 1-5 ຄົນ, ທຸລະກິດມີລາຍຮັບສະເລ່ຍຕໍ່ເດືອນແມ່ນຕ່ຳກວ່າ 50 ລ້ານກີບ ແລະ ສອດຄ່ອງກັບ Lorinthavong (2020) ໄດ້ສຶກສາກ່ຽວກັບສະພາບການປະກອບທຸລະກິດຂະໜາດນ້ອຍໃນເຂດເທດສະບານເມືອງຫຼວງນ້ຳທາ, ແຂວງຫຼວງນ້ຳທາ ເຊິ່ງຊີ້ໃຫ້ເຫັນວ່າ: ສ່ວນຫຼາຍແມ່ນຈັດຕັ້ງທຸລະກິດແບບເຈົ້າຂອງຄົນດຽວ, ໄລຍະເວລາໃນການປະກອບທຸລະກິດແມ່ນມີໄລຍະເວລາ 5-6 ປີ, ໝວດໝູ່ປະເພດສິນຄ້າທີ່ຈຳໜ່າຍແມ່ນເຄື່ອງອຸປະໂພກ, ລັກສະນະການດຳເນີນທຸລະກິດເປັນຜູ້ຂາຍສົ່ງ.

ການດຳເນີນງານຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນເຂດເມືອງໄຊຍະບູລີ ໂດຍລວມແລ້ວປະສົບຜົນສຳເລັດໃນການດຳເນີນທຸລະກິດຢູ່ໃນລະດັບຫຼາຍ ໃນນີ້ຄວາມສຳເລັດໃນການດຳເນີນງານຂອງຜູ້ປະກອບການທຸລະກິດ SMEs ທີ່ມີຄ່າສະເລ່ຍສູງໃນລຳດັບທຳອິດແມ່ນຄວາມສຳເລັດໃນດ້ານການຕະຫຼາດ/ລູກຄ້າ, ລຳດັບຮອງລົງມາແມ່ນຄວາມສຳເລັດໃນດ້ານການເງິນ, ຜົນຕອບແທນ/ກຳໄລ/ຍອດຂາຍ, ຖັດມາແມ່ນດ້ານການບໍລິຫານພາຍໃນອົງກອນ/ມີຄວາມເປັນລະບົບໄດ້ມາດຕະຖານ ແລະ ສຸດທ້າຍແມ່ນຄວາມສຳເລັດດ້ານການຈະເລີນເຕີບໂຕທຸລະກິດ, ຂະຫຍາຍໂຮງຈັກໂຮງງານ ຫຼື ສາຂາ ເຊິ່ງເປັນຄວາມສຳເລັດໃນລະດັບປານກາງ ເຊິ່ງຜົນການຄົ້ນຄວ້າມີຄວາມສອດຄ່ອງກັບ Sayavong (2019) ໂດຍຊີ້ໃຫ້ເຫັນວ່າ: ລະດັບຄວາມສາມາດໃນການແຂ່ງຂັນຂອງທຸລະກິດ SMEs ໃນເມືອງໄຊຍະບູລີ ເຫັນວ່າ ມີຄວາມສາມາດຢູ່ໃນລະດັບສູງ ແລະ ໃນນີ້ດ້ານທີ່ມີຄວາມສາມາດສູງກວ່າໝູ່ອັນດັບທຳອິດແມ່ນ ຄວາມສາມາດທາງດ້ານການເງິນ, ຮອງລົງມາແມ່ນຄວາມສາມາດດ້ານການຕະຫຼາດ ແລະ ຄວາມສາມາດທາງການບໍລິຫານພາຍໃນອົງກອນ, ສຸດທ້າຍດ້ານທີ່ມີຄວາມສາມາດຕ່ຳກວ່າໝູ່ແມ່ນຄວາມສາມາດດ້ານການຜະລິດ ການບໍລິການ ການຈຳໜ່າຍ. ໃນນີ້ຍັງສອດຄ່ອງກັບ Chahmavong (2021) ໄດ້ສຶກສາກ່ຽວກັບຄວາມສຳເລັດໃນການດຳເນີນທຸລະກິດຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ເຊິ່ງຊີ້ໃຫ້ເຫັນວ່າໂດຍລວມທຸລະກິດບໍລິການໃນນະຄອນຫຼວງພະບາງມີຄວາມສຳເລັດໃນການດຳເນີນທຸລະກິດຢູ່ໃນລະດັບຫຼາຍ ໂດຍປະກອບດ້ວຍຄວາມສຳເລັດໃນດ້ານລູກຄ້າ, ດ້ານຂະບວນການບໍລິຫານພາຍໃນ, ດ້ານການຮຽນຮູ້ ແລະ ດ້ານເຕີບໂຕຂອງອົງກອນ ແລະ ດ້ານການເງິນ ນອກຈາກນີ້ຍັງມີຄວາມສອດຄ່ອງກັບຜົນ

ການຄົ້ນຄວ້າຂອງ Hoongsengfha et al. (2018) ເຊິ່ງໄດ້ສະແດງໃຫ້ເຫັນວ່າຜູ້ປະກອບການໃນທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງໂດຍລວມແມ່ນມີຄວາມສຳເລັດຂອງການດຳເນີນທຸລະກິດຂະໜາດນ້ອຍໃນລະດັບຫຼາຍ ໃນນີ້ຄວາມສຳເລັດຫຼາຍກ່ວາໝູ່ແມ່ນທາງດ້ານການບໍລິຫານຈັດການພາຍໃນຂອງທຸລະກິດ, ຮອງລົງມາແມ່ນດ້ານລູກຄ້າຂອງທຸລະກິດ, ຖັດລົງມາແມ່ນດ້ານການຮຽນຮູ້ ແລະ ການເຕີບໂຕຂອງທຸລະກິດ ແລະ ສຸດທ້າຍແມ່ນດ້ານຜົນຕອບແທນຂອງທຸລະກິດ ຕະຫຼອດເຖິງຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Lattanakone (2023) ໄດ້ຄົ້ນພົບວ່າລະດັບຄວາມສາມາດໃນການດຳເນີນງານຂອງການປະກອບທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ ແມ່ນມີລະດັບດີຫຼາຍ ໄດ້ແກ່: ດ້ານການຜະລິດ/ການບໍລິການ ແລະ ການບໍລິຫານຈັດການ, ສ່ວນດ້ານການເງິນ ແລະ ດ້ານການຕະຫຼາດແມ່ນມີຄວາມສາມາດໃນລະດັບດີ.

ປັດໄຈສະພາບແວດລ້ອມໃນການດຳເນີນທຸລະກິດສິ່ງຜົນຕໍ່ຄວາມສຳເລັດໃນການດຳເນີນທຸລະກິດໂດຍລວມຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະກາງ ປະກອບມີ: ປັດໄຈຄຸນລັກສະນະຂອງຜູ້ປະກອບການ, ດ້ານສັງຄົມ-ວັດທະນະທຳ, ດ້ານເຕັກໂນໂລຊີ ແລະ ປັດໄຈດ້ານຂໍ້ກຳນົດ ແລະ ລະບຽບກົດໝາຍ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Sayavong (2019) ໄດ້ ສຶກສາອິດທິພົນຂອງປັດໄຈທີ່ສົ່ງຜົນຕໍ່ສັກກະຍະພາບທາງການແຂ່ງຂັນຂອງທຸລະກິດ SMEs ໃນເມືອງໄຊຍະບູລີ ສະແດງໃຫ້ເຫັນວ່າ ປັດໄຈທີ່ສົ່ງຜົນຕໍ່ສັກກະຍະພາບທາງການແຂ່ງຂັນຂອງທຸລະກິດ SMEs ໃນເມືອງໄຊຍະບູລີ ເຫັນວ່າ: ປັດໄຈພາຍໃນອົງກອນ ສົ່ງຜົນຕໍ່ຄວາມສາມາດທາງດ້ານການເງິນ ແລະ ຄວາມສາມາດທາງດ້ານການຜະລິດ, ການບໍລິການ, ການຈຳໜ່າຍ; ປັດໄຈທາງດ້ານເຕັກໂນໂລຊີສົ່ງຜົນຕໍ່ຄວາມສາມາດສົ່ງຜົນຕໍ່ຄວາມສາມາດທາງດ້ານການຜະລິດ, ການບໍລິການ, ການຈຳໜ່າຍ ແລະ ຄວາມສາມາດທາງດ້ານການຕະຫຼາດ; ປັດໄຈດ້ານການເມືອງ ກົດໝາຍ ນະໂຍບາຍ ສົ່ງຜົນຕໍ່ຄວາມສາມາດທາງດ້ານການຕະຫຼາດ ແລະ ຄວາມສາມາດທາງດ້ານການບໍລິຫານງານພາຍໃນອົງກອນ ແລະ ປັດໄຈດ້ານວັດທະນະທຳສົ່ງຜົນຕໍ່ຄວາມສາມາດທາງດ້ານການຕະຫຼາດ ແລະ ຜົນການສຶກສາຍັງມີຄວາມສອດຄ່ອງກັບ Hoongsengfha et al. (2018) ເຊິ່ງໄດ້ສະແດງໃຫ້ເຫັນວ່າ ປັດໄຈທີ່ສົ່ງຜົນ/ມີອິດທິພົນຕໍ່ຄວາມສຳເລັດຂອງການດຳເນີນທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງແມ່ນປະກອບມີ 4 ປັດໄຈຫຼັກຄື: ປັດໄຈດ້ານການບໍລິຫານຈັດການພາຍໃນ (β=0.147), ປັດໄຈດ້ານຜູ້ປະກອບການ (β=0.135), ປັດໄຈດ້ານສັງຄົມ-ວັດທະນະທຳ (β=0.632) ແລະ ປັດໄຈດ້ານເສດຖະກິດ (β=0.072) ທີ່ມີລະດັບສຳຄັນ/ຍອມຮັບທາງສະຖິຕິທີ່ລະດັບ 95% (α<0.05) ໂດຍບັນດາປັດໄຈເຫຼົ່ານີ້ແມ່ນມີຄວາມສຳພັນກັນແທ້ຈິງກັບຄວາມສຳເລັດຂອງທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ ເຊິ່ງມີຄວາມສຳພັນກັນໃນລະດັບຂ້ອນຂ້າງສູງ (81.4%) ແລະ ມີຄວາມສຳພັນໄປໃນທິດທາງດຽວກັນ ໂດຍມີຄ່າຄວາມຊັດເຈນໃນການພະຍາກອນເທົ່າກັບ 66.3% ($R^2$= 0.663).

## 5. ສະຫຼຸບ

ການດຳເນີນທຸລະກິດ ຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນເຂດເທດສະບານເມືອງໄຊຍະບູລີ ແຂວງໄຊຍະບູລີ ທີ່ເປັນກຸ່ມຕົວຢ່າງຈຳນວນທັງໝົດ 320 ຄົນ ສ່ວນຫຼາຍເປັນທຸລະກິດທີ່ໄດ້ສ້າງຕັ້ງຂຶ້ນຢູ່ລະຫວ່າງ 6 - 10 ປີ, ຈົດຂຶ້ນທະບຽນພາຍໃຕ້ຮູບແບບວິສາຫະກິດສ່ວນບຸກຄົນ, ມີມູນຄ່າຈົດທະບຽນຢູ່ລະຫວ່າງ 240,000,000 – 1,800,000,000 ກີບ, ແຫຼ່ງເງິນທຶນໃນການເລີ່ມຕົ້ນກິດຈະການແມ່ນນຳໃຊ້ທຶນຕົນເອງ 100%, ນຳໃຊ້ກຳໄລສະສົມເປັນແຫຼ່ງເງິນທຶນໝູນວຽນຂອງຜູ້ທຸລະກິດ SMEs, ມີລາຍຮັບສະເລ່ຍຕໍ່ເດືອນຢູ່ລະຫວ່າງ 50,000,000 - 100,000,000 ກີບ, ດຳເນີນທຸລະກິດໃນຂະແໜງການຄ້າ, ມີຕະຫຼາດເປົ້າໝາຍຢູ່ພາຍໃນ ແລະ ມີການຈ້າງແຮງງານຢູ່ລະຫວ່າງ 1 - 5 ຄົນ.

ປັດໄຈຍຸດທະສາດການບໍລິຫານຈັດການພາຍໃນອົງກອນ ຂອງທຸລະກິດ SMEs ໃນເມືອງໄຊຍະບູລີ ມີການຈັດຕັ້ງປະຕິບັດໂດຍລວມໃນການດຳເນີນງານຂອງທຸລະກິດ SMEs ຢູ່ໃນລະດັບ ເຊິ່ງໃນນີ້ປະກອບມີປັດໄຈຍຸດທະສາດດ້ານບຸກຄະລາກອນ, ປັດໄຈຍຸດທະສາດດ້ານຮູບແບບການບໍລິຫານ, ປັດໄຈຍຸດທະສາດດ້ານລະບົບການປະຕິບັດງານ, ປັດໄຈດ້ານຍຸດທະສາດ, ປັດໄຈດ້ານທັກສະ/ຄວາມຮູ້ ຄວາມສາມາດ, ປັດໄຈດ້ານຄ່ານິຍົມຮ່ວມ ແລະ ປັດໄຈຍຸດທະສາດການບໍລິຫານຈັດການພາຍໃນອົງກອນດ້ານໂຄງສ້າງຂອງອົງກອນທຸລະກິດ.

ຄວາມໄດ້ປຽບໃນການດຳເນີນງານຂອງທຸລະກິດ ທຸລະກິດ SMEs ໃນເຂດເມືອງໄຊຍະບູລີ ໂດຍລວມແລ້ວມີຄວາມໄດ້ປຽບທາງການແຂ່ງຂັນຢູ່ລະດັບສູງ ເຊິ່ງໃນນີ້ປະກອບມີ: ຄວາມໄດ້ປຽບໃນດ້ານຕົ້ນທຶນໃນການດຳເນີນງານ, ລຳດັບຮອງລົງມາແມ່ນຄວາມໄດ້ປຽບໃນດ້ານການສ້າງຄວາມແຕກຕ່າງ, ຄວາມໄດ້ປຽບດ້ານການຕອບສະໜອງທີ່ວ່ອງໄວ ແລະ ຄວາມຄວາມໄດ້ປຽບໃນດ້ານການການມຸ້ງຕອບສະໜອງສະເພາະສ່ວນ.

ປັດໄຈຍຸດທະສາດການບໍລິຫານຈັດການພາຍໃນອົງກອນ ຂອງທຸລະກິດ SMEs ໃນເມືອງໄຊຍະບູລີ ທີ່ສົ່ງຜົນຕໍ່ຄວາມໄດ້ປຽບທາງການແຂ່ງຂັນໃນການດຳເນີນງານ ຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ປະກອບມີ: ປັດໄຈຍຸດທະສາດການບໍລິຫານຈັດການພາຍໃນອົງກອນດ້ານທັກສະຄວາມຮູ້ / ຄວາມສາມາດ, ປັດໄຈດ້ານການວາງແຜນຍຸດທະສາດ, ດ້ານຮູບແບບການບໍລິຫານ, ດ້ານບຸກຄະລາກອນ ແລະ ປັດໄຈດ້ານລະບົບການປະຕິບັດວຽກ.

ດັ່ງນັ້ນ, ທາງພາກສ່ວນທີ່ກ່ຽວຂ້ອງ ແລະ ຜູ້ປະກອບການທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງໃນເມືອງໄຊຍະບູລີ ຄວນຊອກ

ຫາແນວທາງຍົກລະດັບດ້ານທັກສະ ຄວາມຮູ້ ຄວາມສາມາດ ຂອງອົງກອນ ແລະ ພະນັກງານໃຫ້ສູງຂຶ້ນ ໂດຍຄວນມີການພັດທະນາ ແລະ ປັບປຸງຄຸນນະພາບຂອງການຜະລິດ ແລະ ການໃຫ້ບໍລິການຂອງທຸລະກິດຢ່າງຕໍ່ເນື່ອງ ແນ່ໃສ່ເພື່ອພັດທະນາທັກສະໃນການຜະລິດ ແລະ ການໃຫ້ບໍລິການທຸກພາກສ່ວນໃຫ້ເປັນທີ່ຍອມຮັບຂອງລູກຄ້າ ແລະ ຄວາມຄ່ອງແຄ້ວ/ຊໍານານຫຼາຍຂຶ້ນ, ໃຫ້ການສົ່ງເສີມພະນັກງານໃຊ້ຄວາມສາມາດໃນການຕອບສະໜອງຄວາມຕ້ອງການຂອງລູກຄ້າໄດ້ຢ່າງວ່ອງໄວ ແລະ ທັນການ, ມີການກະຕຸ້ນພະນັກງານໃຫ້ນໍາໃຊ້ສັກກາຍະພາບຂອງຕົນໃນການປະຕິບັດງານຢ່າງເຕັມທີ່ ມີຄວາມສາມາດທີ່ຫຼາກຫຼາຍດ້ານ ແລະ ມີການພັດທະນາທັກສະການນໍາໃຊ້ເຕັກໂນໂລຊີທັນສະໄໝເພື່ອຫຼຸດຕົ້ນທຶນໃນການໃຫ້ບໍລິການຢ່າງຕໍ່ເນື່ອ, ຜະລິດຕະພາບດ້ານເຕັກໂນໂລຊີ ແລະ ນະວັດຕະກໍາ ດ້ວຍການນໍາໃຊ້ເຄື່ອງມືທີ່ທັນສະໄໝເຂົ້າໃນວຽກງານດ້ານການຜະລິດໃຫ້ຫຼາຍຂຶ້ນອີກຕື່ມເປັນຕົ້ນແມ່ນໃຫ້ການຊ່ວຍເຫຼືອທຸລະກິດຂະໜາດນ້ອຍໃນການພັດທະນາປະສິດທິພາບ ແລະ ຜະລິດຕະພາບທຸລະກິດ, ສະໜັບສະໜູນການໃຊ້ເຕັກໂນໂລຊີ ແລະ ການພັດທະນານະວັດຕະກໍາໃຫ້ໄປສູ່ທາງການຄ້າ, ສົ່ງເສີມດ້ານການຕະຫຼາດໃຫ້ກັບສິນຄ້ານະວັດຕະກໍາຂອງທຸລະກິດຂະໜາດນ້ອຍ, ປັບປຸງລະບົບການຈົດສິດທິບັດລວມທັງພັດທະນາລະບົບຖານຂໍ້ມູນ, ຜົນການວິໄຈ ແລະ ພັດທະນາຄວາມຊ່ຽວຊານຂອງໜ່ວຍງານຕ່າງໆ ເພື່ອໃຫ້ທຸລະກິດຂະໜາດນ້ອຍສາມາດໃຊ້ບໍລິການໄດ້ຢ່າງສະດວກຫຼາຍຂຶ້ນ ແລະ ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງໂດຍສະເພາະພະແນກອຸດສາຫະກໍາ ແລະ ການຄ້າ, ສະຖາບັນການສຶກສາຕ່າງໆ, ສະມາຄົມທຸລະກິດ, ຄວນໃຫ້ຄວາມສໍາຄັນໂດຍການຝຶກອົບຮົມ, ຈັດສໍາມະນາຕ່າງໆຂຶ້ນຢ່າງຕໍ່ເນື່ອງເພື່ອເປັນເຜີຍແຜ່ ແລະ ເພີ່ມພູນຄວາມຮູ້, ທັກສະການດໍາເນີນທຸລະກິດໃນດ້ານຕ່າງໆ ແລະ ສ້າງມູມມອງແນວຄິດແບບໃໝ່ໆຂອງການດໍາເນີນທຸລະກິດໃຫ້ແກ່ຜູ້ປະກອບການ ແລະ ພະນັກງານບຸກຄະລາກອນ ສົ່ງເສີມຄວາມຮູ້ດ້ານການດໍາເນີນງານໃຫ້ແກ່ຜູ້ປະກອບການເປັນຕົ້ນແມ່ນຄວາມຮູ້ກ່ຽວກັບການອອກແບບລະບົບເຮັດວຽກໃນທຸລະກິດ, ການປະສານງານ ແລະ ການສື່ສານຢ່າງທົ່ວເຖິງ, ການວາງແຜນ ແລະ ວິເຄາະຂໍ້ມູນທາງທຸລະກິດ, ການຕັດສິນໃຈ ແລະ ແກ້ໄຂບັນຫາໄດ້ຢ່າງວ່ອງໄວ ແລະ ຖືກຕ້ອງ, ການນໍາໃຊ້ເຕັກໂນໂລຊີເຂົ້າໃນການດໍາເນີນທຸລະກິດ, ມີລະບົບການຈັດການຄຸນນະພາບ ເຊິ່ງຖ້າຫາກໃຫ້ຄວາມສໍາຄັນກັບປັດໄຈເຫຼົ່ານີ້ສູງຂຶ້ນ ກໍ່ຈະເຮັດໃຫ້ທຸລະກິດມີສະພາບການດໍາເນີນທີ່ດີຂຶ້ນ ແລະ ເປັນການສົ່ງເສີມໃຫ້ຜູ້ທີ່ມີຄວາມຄິດລິເລີ່ມຫັນມາສົນໃຈປະກອບທຸລະກິດເປັນຂອງຕົວເອງ ແລະ ຍັງເປັນການກະຕຸ້ນລະບົບເສດຖະກິດພາຍໃນປະເທດໃຫ້ດີຂຶ້ນອີກດ້ວຍອີກດ້ວຍ.

ຜູ້ປະກອບການທຸລະກິດ SMEs ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຄວນຍາດແຍ່ງໂອກາດໃຫ້ສາມາດເຂົ້າຮ່ວມໂຄງການການຝຶກອົບຮົມ ຫຼື ໂຄງການສໍາມະນາຕ່າງໆໃຫ້ຫຼາຍຂຶ້ນ ເພື່ອເປັນການພັດທະນາດ້ານຄວາມຮູ້ ຄວາມສາມາດ ໃນດ້ານການດໍາເນີນງານເຊັ່ນ: ດ້ານການຜະລິດ, ໃຫ້ມີຄວາມຖືກຕ້ອງຄວາມຕ້ອງການຂອງຕະຫຼາດ ແລະ ການປ່ຽນແປງທີ່ວ່ອງໄວຂອງວິທະຍາສາດ ວິທະຍາການຕ່າງໆຢູ່ຕະຫຼອດເວລາ, ມີການອອກບູດຈັດງານຕະຫຼາດນັດຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຢ່າງຕໍ່ເນື່ອງ, ເຂົ້າຮ່ວມກຸ່ມຂອງສະມາຄົມທຸລະກິດເພື່ອຮັບຮູ້ຂໍ້ມູນຂ່າວສານກ່ຽວກັບການດໍາເນີນງານທາງທຸລະກິດຕ່າງໆ, ໂດຍສະເພາະແມ່ນດ້ານການຜະລິດແມ່ນຍັງມີບັນຫາໃນການດໍາເນີນຫຼາຍທີ່ສຸດ ເປັນຕົ້ນແມ່ນການຄວບຄຸມຕົ້ນທຶນການຜະລິດ, ດ້ານການບໍລິຫານຈັດການພາຍໃນອົງກອນ. ດັ່ງນັ້ນ, ຄວນມີການເຂົ້າຮ່ວມໂຄງການສໍາມະນາເພື່ອເພີ່ມຄວາມຮູ້ຄວາມສາດໃນດ້ານການຄວບຄຸມຄຸນນະພາບການຜະລິດ ແລະ ການບໍລິຫານຈັດການພາຍໃນອົງກອນໃຫ້ມີປະສິດທິພາບໃນການບໍລິຫານຈັດການອົງກອນ ເຊິ່ງຈະສາມາດຊ່ວຍສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດໃຫ້ສູງຂຶ້ນໃນອານາຄົດ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງແຜນການ ແລະ ການລົງທຶນ. (2021). *ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX.*

ທະນາຄານແຫ່ງ ສປປ ລາວ. (2022). *ບົດລາຍງານເສດຖະກິດ*, ໜ້າ 26.

ພະແນກແຜນການ ແລະ ການລົງທຶນ ແຂວງໄຊຍະບູລີ. (2020). *ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII* (2021-2025).

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງໄຊຍະບູລີ. (2023). *ບົດສະຫຼຸບການຈັດຕັ້ງການເຄື່ອນໄຫວວຽກງານປະຈໍາປີ ແລະ ທິດທາງແຜນການປະຈໍາປີ 2024.*

ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງໄຊຍະບູລີ. (2023). *ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈໍາປີ 2023 ແລະ ທິດທາງແຜນການ ປະຈໍາປີ 2024.* ໜ້າ 8.

Chahmavong, A. (2021). *Factors related to the success of service business in LuangPrabang City, LuangPrabang province.* [Master thesis]. Faculty of Economic and Tourism. Souphanouvong University.

Cochran, W. (1963). *Sampling techniques.* (2nd Ed). New York: John Wiley and Sons, Inc.

Hoongsengpha, S., Indavong, D., Khomthavong, P., Somsaksaysompheng, U., Phomma, S., Sithirajtvongsa, V., Phengsavath, S., & Oupravanh, Y. (2020). The success factors of SME business in Luangpabang capital. *Souphanouvong Journal: Multi-disciplinary Research of Souphanouvong University. 6*(1), 154-161.

Huggins, Robert; & Johnston, Andrew. (2009). *Knowledge Networks in an Uncompetitive Region: SME Innovation and Growth. Growth and Change. 40*(2). p. 227-259.

Lorinthavong, S. (2020). *Factors affect the competitive competency of small business in Luangnamtha province*. [Final report]. Faculty of Economic and Tourism. Souphanouvong University.

Liyaket, K., Hoongsengpha, S., & Indavong, D. (2024). The Factors affecting towards on the need to access funding of the SME Promotion Fund of small and medium-sized business Entrepreneur in Nan District, Luang Prabang Province. *Souphanouvong University Journal: Multidisciplinary Research and Development. 10*(2). p. 36-45.

Lattanakone, P. (2023). Factors affecting small and medium enterprises (SMEs) operators in LuangPrabang City. *Souphanouvong University Journal: Multidisciplinary research and development. 9*(2). p. 138-145.

Sirivanh, T. (2015). *Small business managemen*t. National Uiniversity of laos. Faculty of Economics and management.

Siljiru, T. (2010). *Research and Statistical data analysis by SPSS and AMOS*. (11th Ed). Bangkok: business R and D ordinary partnership.

Sayavong, B. (2019). *Potential competition of small and medium enterprises in Sayabouly district, Sayabouly Province*. [Final report]. Faculty of Economic and Tourism. Souphanouvong University.

Yamane, T. (1973). *Statistics: An Introductory Analysis.* (3rd Edition), Harper and Row, New York.